ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ສາລະວັນ

ພະແນກອຸດສາຫະກຳ ແລະ ການຄ້າ

ເລກທີ.334./ພອຄ,ສວ

ສາລະວັນ, ລົງວັນທີ.24...2...2026

**ແຈ້ງການປະມູນ**

ເຖິງ: ບໍລິສັດ ທີ່ດຳເນີນກິດຈະການດ້ານໄຟຟ້າ ທັງພາຍໃນ ແລະ ຕ່າງແຂວງ.

ເລື່ອງ: ເຂົ້າຮ່ວມປະມູນໂຄງການລົງທຶນຂອງລັດປະຈາປີ 2026 (ໂຄງການກໍ່ສ້າງລະບົບຕາຂ່າຍໄຟຟ້າ).

- ອີງຕາມ ກົດໝາຍວ່າການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳວ່າດ້ວຍການປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າແຂວງໆ ສາລະວັນ ວ່າດ້ວຍການຮັບຮອງເອົາກົງຈັກການຈັດຕັ້ງ ແລະ ບຸກຂະລາກອນຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ ສາລະວັນ ສະບັບເລກ ທີ 1283/ຈຂ.ສວ,ລົງວັນທີ 16 ກັນຍາ 2025.
- ອີງຕາມ ແຈ້ງການຂອງພະແນກການເງິນແຂວງ  ສະບັບເລກທີ 33/ກງຂ.ສວ,ລົງວັນທີ 19 ກຸມພາ 2026.

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງສາລະວັນ ຂໍແຈ້ງມາຍັງບັນດາບໍລິສັດ ທີ່ດຳເນີນວິສາຫະກິດດ້ານໄຟຟ້າພາຍໃນ ແລະ ຕ່າງແຂວງ ທີ່ມີຄວາມສົນໃຈ ເຂົ້າຍື່ນຊອງປະມູນ ໂຄງການກໍ່ສ້າງຕາຂ່າຍໄຟຟ້າແຮງກາງ 22 ກວ, ແຮງຕ່ຳ 0,4 ກວ, ຕິດຕັ້ງໝໍ້ແປງ ເຊິ່ງເປັນການລົງທຶນຂອງລັດ ຫຼື ທຶນງົບປະມານ ປະຈຳປີ 2026 ຄື:

1. ໂຄງການກໍ່ສ້າງລະບົບຕາຂ່າຍໄຟຟ້າແຮງດັນກາງ 22 kV, ແຮງດັນຕ່ຳ 0,4 kV ແລະ ຕິດຕັ້ງໝໍ້ແປງ 3P50 kVA, ເຂົ້າບ້ານ ເຕົ້າປູນ (ຄຸ້ມໂຮງຮຽນ) ເມືອງ ສາລະວັນ ແຂວງ ສາລະວັນ.
2. ໂຄງການກໍ່ສ້າງລະບົບຕາຂ່າຍໄຟຟ້າແຮງດັນກາງ 22 kV, ແຮງດັນຕ່ຳ 0.4 kV ແລະ ຕິດຕັ້ງໝໍ້ແປງ 3P50 kVA ເຂົ້າບ້ານຫຼັກສອງ (ຮ່ອມຄ່າຍທະຫານພູຄູນ) ເມືອງ ສາລະວັນ ແຂວງ ສາລະວັນ.

- ຖ້າບໍລິສັດໃດຫາກມີຄວາມສົນໃຈສາມາດຕິດຕໍ່ ຫຼື ເຂົ້າໄປຊື້ຊອງປະມູນ ຢູ່ທີ່ຫ້ອງການຈັດຕັ້ງ-ບໍລິຫານ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງສາລະວັນ ຕາມວັນ ແລະ ເວລາລັດຖະການໄດ້.

❖ ຂາຍຊອງປະມູນວັນທີ  20/2/2026 (ຜູ້ທີ່ມີຈຸດປະສົງຢາກເຂົ້າຮ່ວມການປະມູນໂຄງການດັ່ງກ່າວ ຕ້ອງໄດ້ເສຍຄ່າເອກະສານປະມູນ ເປັນເງິນສົດ ຈຳນວນ 1.500.000 ກີບ /ຊອງ).

❖ ຜູ້ທີ່ຈະເຂົ້າຮ່ວມປະມູນຕ້ອງສົ່ງຊອງປະມູນ ທີ່ພະແນກອຸດສາຫະກຳ ແລະ ການຄ້າແຂວງສາລະວັນ ກ່ອນວັນທີ 13/3/2026 ແລະ ຈະໄດ້ເປີດຊອງປະມູນລະຫວ່າງວັນທີ.........................2026.

ດັ່ງນັ້ນ,ຈິ່ງແຈ້ງມາຍັງທ່ານ ອຳນວຍການບໍລິສັດທີ່ດຳເນີນກິດຈະການດ້ານໄຟຟ້າ ເພື່ອຊາບ.

**ຫົວໜ້າພະແນກ**

ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງສາລະວັນ

ໄພທິຍາ ວົງຈອມສີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ສາລະວັນ

ພະແນກອຸດສາຫະກຳ ແລະ ການຄ້າ

ເລກທີ 394/ພອຄ,ສວ

ສາລະວັນ, ລົງວັນທີ 25.2.2026

**ຄຳແນະນຳ**

**ບັນດາບໍລິສັດທີ່ຈະເຂົ້າຮ່ວມແຂ່ງຂັນປະມູນ**

- ອີງຕາມ ກົດໝາຍວ່າດ້ວຍໄຟຟ້າ ສະບັບເລກທີ 19/ສພຊ, ລົງວັນທີ 09 ພຶດສະພາ 2017.
- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າແຂວງໆ ສາລະວັນ ວ່າດ້ວຍການຮັບຮອງເອົາກົງຈັກການຈັດຕັ້ງ ແລະ ບຸກຂະລາກອນຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ ສາລະວັນ ສະບັບເລກ ທີ 1283/ຈຂ.ສວ,ລົງວັນທີ 16 ກັນຍາ 2025.
- ອີງຕາມ ແຈ້ງການຂອງພະແນກການເງິນແຂວງ ສາລະວັນ ສະບັບເລກທີ 33/ກງຂ.ສວ,ລົງວັນທີ 19 ກຸມພາ 2026.

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງສາລະວັນ ຂໍຖືເປັນກຽດແນະນຳບັນດາບໍລິສັດ ທີ່ໄດ້ຮັບອານຸຍາດ ດຳເນີນກິດຈະການດ້ານໄຟຟ້າທັງພາຍໃນແຂວງ ແລະ ຕ່າງແຂວງ ທີ່ມີຄວາມສົນໃຈຢາກເຂົ້າຮ່ວມແຂ່ງຂັນປະມູນ, ລາຍລະອຽດກ່ຽວກັບຈຸດພິເສດ, ທີ່ຕັ້ງໂຄງການເຊິ່ງມີລາຍລະອຽດລຸ່ມນີ້:

1. ຊື່ໂຄງການ: ໂຄງກໍ່ສ້າງລະບົບຕາຂ່າຍໄຟຟ້າແຮງດັນກາງ 22 kV,ແຮງດັນຕ່ຳ 0,4 kV, ຕິດຕັ້ງໝໍ້ແປງ, ທຶນງົບປະມານຂອງລັດປະຈຳປີ 2026, ໄລຍະການກໍ່ສ້າງ 3 ປີ (2026-2028),ໄລຍະການຊຳລະກໍ່ສ້າງ 5 ປີ (2026-2030), ທີ່ຕັ້ງຂອງໂຄງການ: ບ້ານ ເຕົ້າປຸນ (ຄຸ້ມໂຮງຮຽນ) ແລະ ບ້ານຫຼັກສອງ (ຮ່ອມຄ່າຍທະຫານພູຄູນ) ເມືອງສາລະວັນ ແຂວງ ສາລະວັນ ເຊິ່ງມີພູມສັນຖານເປັນເຂດທົ່ງພຽງ.
- ເຂົ້າບ້ານ ເຕົ້າປຸນ (ຄຸ້ມໂຮງຮຽນ) ລວງຍາວຕະຂ່າຍ 22 kV ມີລວງຍາວ 576 m , ລວງຍາວຕະຂ່າຍ 0.4 kV ມີລວງຍາວ 2,502 **m** ຂະໜາດໝໍ້ແປງ 3P100 kVA ຈຳນວນ 1 ຊຸດ.
- ເຂົ້າບ້ານຫຼັກສອງ (ຮ່ອມຄ່າຍທະຫານພູຄູນ) ລວງຍາວຕະຂ່າຍ 22 kV ມີລວງຍາວ 840 m , ລວງຍາວຕະຂ່າຍ 0.4 kV ມີລວງຍາວ 1,330 **m** ຂະໜາດໝໍ້ແປງ 3P50 kVA ຈຳນວນ 1 ຊຸດ.

2. ບໍລິສັດ ທີ່ຈະເຂົ້າຮ່ວມປະມູນ: ແມ່ນອະນຸຍາດສະເພາະບໍລິສັດ ທີ່ມີໃບອະນຸຍາດດຳເນີນກິດຈະການດ້ານໄຟຟ້າ ຖືກຕ້ອງຄົບຖ້ວນຕາມລະບຽບກົດໝາຍ, ມີປະສົບການ ເຄີຍຮັບເໝົາກໍ່ສ້າງລະບົບຕາຂ່າຍໄຟຟ້າ ຢູ່ເຂດຫຸ້ງຍາກທຸລະກັນດານ ແລະ ເຄີຍຮັບໂຄງການລົງທຶນມາກ່ອນ, ມີໃບຢັ້ງຢືນຜົນງານ, ພ້ອມຮູບພາບການເຄື່ອນໄຫວວຽກງານຂອງບໍລິສັດ.

3. ພາຍຫຼັງບໍລິສັດ ເຂົ້າຮັບຊອງປະມູນແລ້ວ ຕ້ອງໄດ້ສົມທົບກັບພະນັກງານວິຊາການ ລົງເບິ່ງພື້ນທີ່ເຂດກໍ່ສ້າງຕົວຈິງ ແລະ ລົງກວດກາສະໜາມ, ຄວາມພ້ອມດ້ານພາຫະນະກົນຈັກຂອງບໍລິສັດ, ເພື່ອຢັ້ງຢືນ ແລະ ປະກອບໃສ່ເອກະສານການປະມູນ.

4. ຜູ້ເຂົ້າຮ່ວມແຂ່ງຂັນການປະມູນ ຕ້ອງມີໃບຢັ້ງຢືນການເຄື່ອນໄຫວຖານະທາງດ້ານການເງິນ ຫຼື ໃບຢັ້ງຢືນການໝູນວຽນເງິນຂອງບໍລິສັດ ໃນໄລຍະ 03 ປີຜ່ານມາ ແລະ ຕ້ອງແມ່ນທະນາຄານເປັນຜູ້ອອກໜັງສືຄ້ຳປະກັນໃຫ້.

ດັ່ງນັ້ນ, ຈຶ່ງໄດ້ແນະນຳມາຍັງບັນດາບໍລິສັດ ໄດ້ຮັບຊາບ.

**ຫົວໜ້າພະແນກ**

ບຸນທະວີ ສີສົມພອນ